**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 2199/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 01/10/2020

# **ແຈ້ງການ**

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ການເຫັນດີໃຫ້ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ດຳເນີນການຊື້ຮຸ້ນ ຜ-ຟຟລ ທີ່ ຟຟລ ຖືຄອງ.

- ອີງຕາມຂໍ້ຕົກລົງ ວ່າດ້ວຍການຂາຍຮຸ້ນ ຂອງລັດວິສາຫະກິດ ໄຟຟ້າລາວ (ຟຟລ) ທີ່ມີຢູ່ໃນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ສະບັບເລກທີ 2520/ກງ, ລົງວັນທີ 28 ກັນຍາ 2020;
- ອີງຕາມໜັງສືແຈ້ງຕອບ ກ່ຽວກັບການສະເໜີຊື້ຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂອງ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 187/ສຄຄຊ, ລົງວັນທີ 30 ກັນຍາ 2020;

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ປັດຈຸບັນ ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ (ສຄຄຊ) ໄດ້ເຫັນດີໃຫ້ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ( ບໍລິສັດ ພຊທວ) ດຳເນີນການຊື້ຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ທີ່ລັດວິສາຫະກິດໄຟຟ້າລາວ (ຟຟລ) ຖືຄອງຢູ່ ໃນສັດສ່ວນ 24 ສ່ວນຮ້ອຍ ຕາມການສະເໜີຂອງ ບໍລິສັດ ພຊທວ ແລະ ຟຟລ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

**ຜູ້ອຳນວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company

ດວງສີ ພາຣາຍົກ

ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la